ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຄຳມ່ວນ
ຄະນະປະຈຳ

ເລກທີ.146../ຄປຈ.ສພຂ
ຄຳມ່ວນ, ວັນທີ.20...ທັນວາ...2021

ມະຕິ
ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ສະບັບປັບປຸງ) ປີ 2021

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ ມະຕິຕົກລົງຂອງປະທານສະພາປະຊາຊົນແຂວງຄຳມ່ວນ ສະບັບເລກທີ 24/ຄປຈ.ສພຂ, ລົງວັນທີ 11 ຕຸລາ 2016;
- ອີງຕາມ ໜັງສືສະເໜີ ຂອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ສະບັບເລກທີ 28/ຄວສຜ.ສພຂ, ລົງວັນທີ 31 ສິງຫາ 2021.

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ມະຕິຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ, ລະບອບປະຊຸມ, ລະບອບວິທີເຮັດວຽກ ແລະກົນໄກປະສານງານຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເພື່ອແນໃສ່ການປັບປຸງອຳນາດລັດຂັ້ນທ້ອງຖິ່ນ, ເຮັດໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານມີຜົນສຳເລັດຕາມລະດັບຄາດໝາຍ ພ້ອມທັງຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ມາດຕາ 2 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ

2.1 ທີ່ຕັ້ງ

ຄະນະກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າ ແມ່ນກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນແຂວງ ເຊິ່ງປະກອບດ້ວຍບັນດາສະມາຊິກສະພາ

ສແກນດ້ວຍ CamScanner

ປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕາມການຮັບຮອງເອົາໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງໃນແຕ່ລະຊຸດ.

ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ມີອາຍຸການ 5 ປີ ເທົ່າກັບອາຍຸການ ຂອງສະພາປະຊາຊົນຂັ້ນແຂວງ ແລະ ມີຊື່ຫຍໍ້ ເປັນຕົວອັກສອນວ່າ " ຄວສຜ ".

2.2 (ປັບປຸງ) ພາລະບົດບາດ

ຄະນະກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າ ມີພາລະບົດບາດເປັນເສນາທິການໃຫ້ ສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການສ້າງ ແລະ ປັບປຸງນິຕິກຳ ການຄົ້ນຄ້ວາບັນຫາສຳຄັນຂອງແຂວງ, ຕິດຕາມກວດກາ ແລະ ການຊຸກຍູ້ຈັດຕັ້ງປະຕິບັດລັດຖະທຳມະນູນ ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິຂອງສະພາປະຊາຊົນຂັ້ນແຂວງ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກ່ຽວກັບພັດທະນາຊົນະບົດ ແລະແກ້ໄຂຄວາມທຸກຍາກ, ການປົກຄອງທ້ອງຖິ່ນຈັດສັນ ພຸມລຳເນົາ ແລະອາຊີບຄົງທີ່,ສ້າງບ້ານພັດທະນາ ແລະໂຄງການລົງທຶນ ທີ່ມີຜົນກະທົບຕໍ່ປະຊາຊົນ ບັນດາເຜົ່າ, ໃນຂົງເຂດສຶກສາທິການ ແລະ ກິລາ, ສາທາລະນະສຸກ, ຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ, ແຮງງານ ແລະ ສະຫວັດດີການ-ສັງຄົມ,ວຽກງານພາຍໃນ, ແນວລາວສ້າງຊາດ, ອົງການຈັດຕັ້ງ ມະຫາຊົນ, ອົງການອຳນາດລັດຂອງແຂວງ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ.

ມາດຕາ 3 (ໃໝ່) ຂອບເຂດການນຳໃຊ້

ມະຕິ ສະບັບນີ້ນຳໃຊ້ສະເພາະຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາ ປະຊາຊົນແຂວງຄຳມ່ວນ.

ໝວດທີ 2
ສິດ ແລະ ໜ້າທີ່ ຂອງຄະນະກຳມະການ

ມາດຕາ 4 (ປັບປຸງ) ສິດ ແລະ ໜ້າທີ່

4.1 ດ້ານນິຕິກຳ

1. ຄົ້ນຄວ້າ, ປະກອບຄຳເຫັນໃສ່ຮ່າງນິຕິກຳຂອງອົງການບໍລິຫານລັດ ໃນຂົງເຂດຄວາມຮັບຜິດຊອບ ຂອງຕົນ ຫຼື ຕາມການມອບໝາຍ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
2. ຄົ້ນຄວ້າ, ປະກອບຄຳເຫັນໃສ່ຮ່າງກົດໝາຍ ແລະ ບັນດານິຕິກຳລຸ່ມກົດໝາຍ ໃນຂົງເຂດຄວາມ ຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ປະສານສົມທົບ ກັບຄະນະກຳມະການພາຍໃນສະພາປະຊາຊົນຂັ້ນແຂວງ ເພື່ອໂຄສະນາເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳອື່ນ ຕາມຄວາມຮັບຜິດຊອບຂອງຕົນ ຫຼື ຕາມການ ມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

สแกนด้วย CamScanner

4. ຄົ້ນຄ້ວາ ການໂຈະການຈັດຕັ້ງປະຕິບັດ, ການປັບປຸງ, ຍົກເລີກ, ລົບລ້າງນິຕິກຳຂອງອົງການລັດຂັ້ນແຂວງ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ນຳສະເໜີຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງພິຈາລະນາ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

4.2 ດ້ານການຕິກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ

1. ຄົ້ນຄວ້າ, ປະກອບຄຳເຫັນຕໍ່ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ແຜນງົບປະມານຂອງແຂວງປະຈຳ 1 ປີ ແລະ 5 ປີ ຕາມການມອບໝາຍຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
2. ຄົ້ນຄ້ວາ, ປະກອບຄຳເຫັນຕໍ່ບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງລັດ, ລວມໝູ່ ແລະ ຂອງປະຊາຊົນບັນດາເຜົ່າ ທີ່ນຳສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ ຕາມຄວາມຮັບຜິດຊອບຂອງຕົນ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
3. ຄົ້ນຄວ້າ, ປະກອບຄຳເຫັນຕໍ່ໂຄງການລົງທຶນຂອງລັດ, ແຜນພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ແລະ ວຽກອື່ນໆ ທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງຄະນະກຳມະການ;
4. ສ້າງຮ່າງແຜນການເຄື່ອນໄຫວວຽກງານຂອງຕົນແຕ່ລະໄລຍະ ແລະ ສະຫຼຸບວຽກງານການຈັດຕັ້ງປະຕິບັດແຜນການດັ່ງກ່າວ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;
5. ຄົ້ນຄ້ວາ ສະເໜີປັບປຸງກົງຈັກການຈັດຕັ້ງ, ຄະນະກຳມະການ ແລະ ບຸກຄະລາກອນ ທີ່ເປັນເສນາທິການຊ່ວຍວຽກ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານແຕ່ລະໄລຍະຕາມຄວາມເໝາະສົມ ແລະ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
6. ຍົກລະດັບຄວາມຮູ້, ຄວາມສາມາດຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ພາຍໃນຄະນະກຳມະການ ແລະ ບຸກຄະລາກອນ ທີ່ເປັນເສນາທິການຊ່ວຍວຽກດ້ວຍຫຼາຍຮູບແບບໃຫ້ມີຄຸນນະພາບ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

4.3 ດ້ານການຕິດຕາມກວດກາ

1. ຕິດຕາມກວດກາ ບັນດາອົງການບໍລິຫານລັດຂັ້ນແຂວງ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ມະຕິຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
2. ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນການລົງທຶນຂອງລັດ, ແຜນພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ທີ່ສະພາປະຊາຊົນຂັ້ນແຂວງ ໄດ້ຮັບຮອງເອົາໃນແຕ່ລະໄລຍະຕາມຂອບເຂດຕົນຮັບຜິດຊອບ;
3. ຕິດຕາມກວດກາ ການອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ແລະ ການຈັດຕັ້ງປະຕິບັດວຽກງານ ຂອງອົງການບໍລິຫານລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງຮັບຮອງເອົາຕາມຂອບເຂດຕົນເອງຮັບຜິດຊອບ;

สแกนด้วย CamScanner

5. ຕິດຕາມກວດກາ ການແກ້ໄຂຄຳຮ້ອງຄຳສະເໜີຂອງປະຊາຊົນ ທີ່ສະເໜີໃຫ້ອົງການບໍລິຫານລັດ ແລະ ພາກສ່ວນທີ່ກ່ຽວຂ້ອງແກ້ໄຂ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ເຊີນພາກສ່ວນກ່ຽວຂ້ອງ ມາລາຍງານການເຄື່ອນໄຫວວຽກງານ ຕໍ່ກອງປະຊຸມຄົບຄະນະກຳມະການ ແລະ ຊັກຖາມບັນຫາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ແຕ່ງຕັ້ງໜ່ວຍງານສະເພາະກິດ ເມື່ອຫາກມີຄວາມຈຳເປັນ ຫຼື ໄດ້ຮັບການມອບໝາຍ ຈາກຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອລົງເກັບກຳຂໍ້ມູນກ່ຽວກັບບັນຫາໃດໜຶ່ງຢູ່ທ້ອງຖິ່ນ ໃນຂອບເຂດທີ່ຕົນຮັບຜິດຊອບ;
8. ເຂົ້າຮ່ວມກັບພະແນກການ ແລະ ອົງການທີ່ກ່ຽວຂ້ອງ ໃນການຕິດຕາມກວດກາການແກ້ໄຂບັນຫາຜົນກະທົບໃດໜຶ່ງຕາມການເຫັນດີ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
9. ຕິດຕາມກວດກາ, ຂໍ້ສະເໜີ ຜ່ານໂທລະສັບສາຍດ່ວນ, ຄຳຮ້ອງຂໍຄວາມເປັນທຳຂອງບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທີ່ກ່ຽວຂ້ອງ, ບັນຫາພົ້ນເດັ່ນທີ່ກະທົບຕໍ່ສັງຄົມ ເພື່ອສະເໜີພາກສ່ວນກ່ຽວຂ້ອງ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ໝວດທີ 3
ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

ມາດຕາ 5 ໂຄງປະກອບກົງຈັກ

ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ປະກອບ ມີ ສອງ ຂະແໜງການຊ່ວຍວຽກ ຄື:

- ຂະແໜງ ວັດທະນະທຳ-ສັງຄົມ;
- ຂະແໜງ ບັນດາເຜົ່າ.

ມາດຕາ 6 ໂຄງປະກອບບຸກຄະລາກອນ

- ປະທານ ຄະນະກຳມະການ;
- ຮອງປະທານ ຄະນະກຳມະການ;
- ກຳມະການ ສັງກັດຄະນະກຳມະການ ເຊິ່ງປະຈຳການຢູ່ບັນດາແໜງການ ແລະ ບັນດາເຂດເລືອກຕັ້ງເມືອງ;
- ຫົວໜ້າ, ຮອງຫົວໜ້າຂະແໜງ ແລະ ວິຊາການຊ່ວຍວຽກ ແມ່ນໄດ້ກຳນົດໄວ້ໃນລະບຽບສະເພາະ.

ມາດຕາ 7 ສິດ ແລະ ໜ້າທີ່ ຂອງປະທານ

1. ຊີ້ນຳ-ນຳພາວຽກງານລວມ, ວຽກງານແນວຄິດການເມືອງ, ການຈັດຕັ້ງຂອງຄະນະກຳມະການ ແລະ ຮັບ ຜິດຊອບໂດຍກົງ ໃນການລາຍງານວຽກງານຮອບດ້ານຂອງຄະນະກຳມະການ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

สแกนด้วย CamScanner

2. ລົງເລິກຊີ້ນຳ-ນຳພາ ຕິດຕາມກວດກາ ວຽກງານສຶກສາທິການ ແລະ ກິລາ, ວຽກງານສາທາ ລະນະສຸກ ວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ວຽກງານແຮງງານ ແລະ ສະຫວັດດີການ ສັງຄົມ ແລະ ຂົງເຂດອື່ນໆທີ່ກ່ຽວຂ້ອງ.
3. ຊີ້ນຳການສ້າງແຜນເຄື່ອນໄຫວວຽກງານ ຂອງຄະນະກຳມະການໃນແຕ່ລະໄລຍະ, ມອບໝາຍ ແລະ ແບ່ງຄວາມຮັບຜິດຊອບໃຫ້ຮອງປະທານ ແລະ ຄະນະກຳມະການ ໃນການປະຕິບັດໜ້າທີ່ວຽກງານ;
4. ຊີ້ນຳ ແລະ ລົງເລິກວຽກງານສ້າງ ແລະ ປັບປຸງນິຕິກຳ, ວຽກງານສຳຄັນພື້ນຖານ ແລະ ວຽກງານຕິດ ຕາມກວດກາ ຂັ້ນແຂວງທີ່ກ່ຽວຂ້ອງກັບຄະນະກຳມະການ;
5. ຮຽກໂຮມ ແລະ ເປັນປະທານກອງປະຊຸມຄະນະກຳມະການ ແລະ ປະຊຸມຄົບຄະນະ ຂອງຄະນະກຳມະການ;
6. ຄົ້ນຄ້ວາ ແລະ ປະກອບຄຳເຫັນ ໃສ່ຮ່າງນິຕິກຳ ທີ່ພົວພັນກັບກຳມະການ, ອອກແຈ້ງການ ແລະ ລົງ ລາຍເຊັນໃສ່ເອກະສານຕ່າງໆ ຂອງຄະນະກຳມະການຕົນ;
7. ລາຍງານ, ສະເໜີບັນຫາຮີບດ່ວນ ແລະ ຂໍທິດຊີ້ນຳ ຈາກຮອງປະທານສະພາປະຊາຊົນຂັ້ນແຂວງ ຜູ້ຊີ້ ນຳ ວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ປະທານສະພາປະຊາຊົນຂັ້ນແຂວງ;
8. ສະເໜີແຕ່ງຕັ້ງ, ຍົກຍ້າຍ, ຊັບຊ້ອນ ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຫຼື ຮັບຜິດຊອບ ວຽກງານໃດໜຶ່ງທີ່ພົວພັນກັບວຽກງານ ຂອງຄະນະກຳມະການຕົນ;
9. ພົວພັນໂດຍກົງ ກັບບັນດາ ປະທານ ຄະນະກຳມາການ ພາຍໃນສະພາປະຊາຊົນແຂວງ, ເລຂາທິການ ສະພາປະຊາຊົນແຂວງ, ບັນດາຫົວໜ້າອົງການບໍລິຫານລັດ ແລະ ອົງການທີ່ກ່ຽວຂ້ອງ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ມາດຕາ 8 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງປະທານ.

1. ຮັບຜິດຊອບຊີ້ນຳ ລົງເລິກວຽກບັນດາເຜົ່າ, ວຽກຂົງເຂດພາຍໃນ ແລະ ອື່ນໆ ຕາມການມອບໝາຍຂອງ ປະທານຄະນະກຳມະການ;
2. ຄົ້ນຄ້ວາ, ປະກອບຄຳເຫັນ ແລະ ກວດກາບັນດາເອກະສານຕ່າງໆ ທີ່ຢູ່ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ;
3. ຊ່ວຍຊີ້ນຳການຄົ້ນຄ້ວາ, ວິໄຈຂໍ້ມູນ ຜົນຂອງການຕິດຕາມກວດກາ ຂອງຄະນະກຳມະການ ແລະ ບົດລາຍ ງານຂອງຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ, ແຜນ ງົບປະມານແຫ່ງລັດ, ມະຕິກອງປະຊຸມຂອງຄະນະປະຈຳສະພາ ແລະ ມະຕິກອງປະຊຸມສະພາປະຊາຊົນ ຂັ້ນແຂວງ ຕາມການມອບໝາຍຂອງປະທານຄະນະກຳມະການ;
4. ໃນກໍລະນີປະທານຄະນະກຳມະການຕິດຂັດ ແມ່ນຮອງປະທານຄະນະກຳມະການເປັນຜູ້ວ່າການແທນ ຕາມ ການມອບໝາຍ ຂອງປະທານຄະນະກຳມະການ;
5. ຊີ້ນຳວຽກງານວິຊາສະເພາະ ແລະ ກວດກາການເຄື່ອນໄຫວວຽກງານ ຂອງຂະແໜງທີ່ຕົນຊີ້ນຳ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງປະທານຄະນະກຳມະການ ຫຼື ຄະນະປະຈຳສະພາ ປະຊາຊົນຂັ້ນແຂວງ.

ມາດຕາ 9 ສິດ ແລະ ໜ້າທີ່ ຂອງກຳມະການ

1. ຜັນຂະຫຍາຍທິດທາງ, ແຜນການເຄື່ອນໄຫວຂອງຄະນະກຳມະການມາເປັນແຜນການເຄື່ອນໄຫວຂອງຕົນ ໃນແຕ່ລະໄລຍະ ແລະ ຈັດຕັ້ງປະຕິບັດບັນດານິຕິກຳດັ່ງກ່າວ;
2. ເຂົ້າຮ່ວມໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ, ແຜນງົບປະມານຂອງແຂວງ ແລະ ບັນດານິຕິກຳຂອງແຂວງ;

สแกนด้วย CamScanner

3. ປະສານສົມທົບກັບບັນດາຄະນະກຳມະການຂອງສະພາປະຊາຊົນຂັ້ນແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ໃນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນຸນ, ກົດໝາຍ, ນິຕິກຳລຸ່ມກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ ໃນແຕ່ລະໄລຍະ;
4. ສະຫຼຸບສັງລວມສະພາບ, ວິເຄາະ, ວິໄຈບັນຫາທີ່ພົ້ນເດັ່ນ ແລະ ສະເໜີວິທີແກ້ໄຂເພື່ອລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາ;
5. ເຂົ້າຮ່ວມກັບຄະນະສະເພາະກິດ ຂອງສະພາປະຊາຊົນຂັ້ນແຂວງ ໃນການລົງຕິດຕາມກວດກາບັນຫາໃດໜຶ່ງ ຕາມການຕົກລົງ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
6. ຄົ້ນຄ້ວາປະກອບຄຳເຫັນໃສ່ເອກະສານຕ່າງໆ ຂອງຄະນະກຳມະການ, ຮ່າງກົດໝາຍທີ່ສະພາແຫ່ງຊາດສົ່ງໃຫ້ ແລະ ນຳໄປຫາບທາມຄຳຄິດຄຳເຫັນພາກສ່ວນທີ່ກ່ຽວຂ້ອງ;
7. ເຂົ້າຮ່ວມກອງປະຊຸມຄົບຄະນະຂອງຄະນະກຳມະການ, ໃນກໍລະນີບໍ່ສາມາດເຂົ້າຮ່ວມໄດ້ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ປະທານຄະນະກຳມະການ ກ່ອນມື້ໄຂກອງປະຊຸມ;
8. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ ແລະ ສະພາບພົ້ນເດັ່ນ ໃນຂົງເຂດທີ່ຕົນຮັບຜິດຊອບລາຍງານໃຫ້ປະທານຄະນະກຳມະການ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຮັບຊາບຢ່າງທັນການ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງປະທານຄະນະກຳມະການ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ມາດຕາ 10 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງຊ່ວຍວຽກ

ສິດ ແລະໜ້າທີ່ ຂອງຂະແໜງຊ່ວຍວຽກ ແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະ ແລະ ຕາມການມອບໝາຍຂອງປະທານ ຫຼື ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ.

ໝວດທີ 4
ກອງປະຊຸມ ຂອງຄະນະກຳມະການ

ມາດຕາ 11 ປະເພດກອງປະຊຸມ

ກອງປະຊຸມ ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ມີ ສອງ ປະເພດຄື:

- ກອງປະຊຸມ ຄະນະກຳມະການ;
- ກອງປະຊຸມ ຄົບຄະນະຂອງຄະນະກຳມະການ.

ມາດຕາ 12 ກອງປະຊຸມຄະນະກຳມະການ

ກອງປະຊຸມຄະນະກຳມະການ ແມ່ນກອງປະຊຸມປຶກສາຫາລືວຽກງານເປັນປົກກະຕິ ທີ່ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານຄະນະກຳມະການເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຊຶ່ງມີຮອງປະທານ, ກຳມະການປະຈຳຄະນະກຳມະການ, ຂະແໜງການຊ່ວຍວຽກເຂົ້າຮ່ວມ.

สแกนด้วย CamScanner

ກອງປະຊຸມຄະນະກຳມະການ ມີເນື້ອໃນດັ່ງນີ້:

- ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນຜ່ານມາ ແລະ ແຜນການເຄື່ອນໄຫວວຽກງານປະຈຳເດືອນຕໍ່ໜ້າຂອງຄະນະກຳມະການ;
- ຄົ້ນຄວ້າ, ສ້າງຮ່າງນິຕິກຳ ທີ່ພົວພັນກັບວຽກງານຂອງຄະນະກຳມະການຕົນ ແລະ ປະກອບຄຳເຫັນໃສ່ຮ່າງນິຕິກຳຕ່າງໆ ຂອງບັນດາຄະນະກຳມະການອື່ນ ຫຼື ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
- ປຶກສາຫາລືການປະຕິບັດວຽກງານຕົວຈິງ ເປັນຕົ້ນເນື້ອໃນ, ວິທີການ ແລະ ຮູບການຕິດຕາມກວດກາ ໃນຂົງເຂດວຽກງານທີ່ຄະນະກຳມະການຕົນຮັບຜິດຊອບ;
- ຄົ້ນຄວ້າ, ວິໄຈສະພາບການ, ບັນຫາທີ່ພົ້ນເດັ່ນທີ່ພົວພັນກັບຄະນະກຳມະການຕົນ ແລະ ສະເໜີມາດຕະການແກ້ໄຂເພື່ອລາຍງານໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງພິຈາລະນາ ແລະ ໃຫ້ທິດຊີ້ນຳ;
- ຄົ້ນຄ້ວາ, ພິຈາລະນາບຳລຸງສ້າງການຝຶກອົບຮົມ, ການແຕ່ງຕັ້ງ, ຍົກຍ້າຍ, ການປົດຕຳແໜ່ງພະນັກງານໃນຂະແໜງຊ່ວຍວຽກ ໂດຍປະສານສົມທົບກັບຄະນະເລຂາທິການ;
- ກະກຽມກອງປະຊຸມຄົບຄະນະ ຂອງຄະນະກຳມະການ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ວຽກງານອື່ນ ທີ່ຈຳເປັນ;
- ມີເນື້ອໃນອື່ນທີ່ມີຄວາມຈຳເປັນ.

ມາດຕາ 13 (ປັບປຸງ) ກອງປະຊຸມຄົບຄະນະຂອງກຳມະການ

ກອງປະຊຸມຄົບຄະນະຂອງຄະນະກຳມະການ ແມ່ນກອງປະຊຸມປຶກສາຫາລືວຽກງານປະຈຳປີ ທີ່ເປີດຂຶ້ນຢ່າງໜ້ອຍປີລະເທື່ອ ໂດຍການຮຽກໂຮມ ແລະ ການເປັນປະທານຂອງປະທານຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ຕາມການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຊຶ່ງມີກຳມະການສັງກັດຄະນະກຳມະການ ເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມຂອງຈຳນວນກຳມະການທັງໝົດ;

ກອງປະຊຸມຄົບຄະນະຂອງຄະນະກຳມະການ ຈະເປີດຂຶ້ນເວລາໃດກໍ່ໄດ້ ຫຼື ຈະເປີດຮ່ວມກັບຄະນະກຳມະການອື່ນ ແລະ ເຊີນບຸກຄົນ, ຄະນະກຳມະການອື່ນທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມນຳກໍ່ໄດ້ ຕາມການເຫັນດີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຄົບຄະນະຂອງຄະນະກຳມະການ ພິຈາລະນາບັນຫາຕ່າງໆ ດັ່ງນີ້:

- ບົດລາຍງານການເຄື່ອນໄຫວວຽກງານໃນໄລຍະ 1 ປີຜ່ານມາ ແລະ ທິດທາງແຜນການວຽກງານໃນປີຕໍ່ໜ້າ ຂອງຄະນະກຳມະການ;
- ຄົ້ນຄ້ວາປະກອບຄຳເຫັນໃສ່ຮ່າງກົດໝາຍ, ຮ່າງນິຕິກຳ;
- ຮັບຟັງການລາຍງານຂອງພະແນກການ ແລະ ອົງການລັດທຽບເທົ່າພະແນກຂັ້ນແຂວງ ທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ສົນໃຈ ແລະ ປະກອບຄຳຄິດຄຳເຫັນໃຫ້ຄຳແນະນຳກ່ຽວກັບການແກ້ໄຂບັນຫາທີ່ຍັງຄ້າງຄາ;
- ວຽກງານອື່ນໃນຂົງເຂດທີ່ຕົນຮັບຜິດຊອບ.

สแกนด้วย CamScanner

ໝວດທີ 5
ຫຼັກການ ແລະ ແບບແຜນວິທີເຮັດວຽກ

ມາດຕາ 14 (ໃໝ່) ຫຼັກການ

ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເຄື່ອນໄຫວຕາມຫລັກການລວມສູນ ປະຊາທິປະໄຕ, ຕົກລົງເປັນໝູ່ຄະນະຖືເອົາກອງປະຊຸມເປັນບ່ອນປຶກສາຫາລື ແລະ ຕົກລົງບັນຫາຕາມສຽງ ສ່ວນຫຼາຍ ມີຄວາມຮັບຜິດຊອບບົນພື້ນຖານລັດຖະທຳມະນູນ ແລະ ທີ່ກົດໝາຍ ໄດ້ກຳນົດໄວ້.

ມາດຕາ 15 (ປັບປຸງ) ແບບແຜນວິທີເຮັດວຽກ

ຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ເຄື່ອນໄຫວວຽກງານ ດ້ວຍລະບອບກອງ ປະຊຸມ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ ໂດຍຫັນແຜນການຂອງສະພາປະຊາຊົນຂັ້ນ ແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ປະຕິບັດໃຫ້ສຳເລັດ, ມີການກວດກາ, ສະຫລຸບ ຖອດຖອນບົດຮຽນ ແລະ ປະຕິບັດລະບອບການລາຍງານ, ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ ແລະ ປະສານ ສົມທົບກັບການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ.

ມາດຕາ 16 ການປະສານງານ

ຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ມີການພົວພັນ ແລະ ປະສານສົມທົບກັບ ຄະນະກຳມະການອື່ນ, ກັບຄະນະເລຂາທິການສະພາປະຊາຊົນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງດ້ວຍຮູບ ການຈັດກອງປະຊຸມ, ປຶກສາຫາລື, ປະສານສົມທົບ ແລະ ການແລກປ່ຽນຂໍ້ມູນຂ່າວສານ, ການຖອດຖອນ ບົດຮຽນຊຶ່ງກັນ ແລະ ກັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ເພື່ອຮັບປະກັນເຮັດ ໃຫ້ການຄົ້ນຄວ້າພິຈາລະນາບັນຫາຕ່າງໆ ມີຄວາມເປັນເອກະພາບກັນ ແລະ ມີຄວາມຖືກຕ້ອງຕາມກົດໝາຍ.

ໝວດທີ 6
ບົດບັນຍັດສຸດທ້າຍ

ມາດຕາ 17 ງົບປະມານ ຂອງຄະນະກຳມະການ

ຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ນຳໃຊ້ງົບປະມານຂອງສະພາປະຊາຊົນຂັ້ນ ແຂວງ ທີ່ໄດ້ຈັດແບ່ງໃຫ້ຕາມສົກປີງົບປະມານ ເພື່ອຮັບໃຊ້ໃນເຄື່ອນໄຫວວຽກງານຂອງຕົນ.

ມາດຕາ 18 ຕາປະທັບ ຂອງຄະນະກຳມະການ

สแกนด้วย CamScanner

ຄະນະກຳມະການວັດທະນາທຳສັງຄົມ ແລະ ບັນດາເຜົ່າ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບວົງມົນເບື້ອງເທິງຂຽນວ່າ " ສະພາປະຊາຊົນແຂວງຄຳມ່ວນ " ເບື້ອງລຸ່ມຂຽນຊື່ " ຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ມາດຕາ 19 ການຈັດຕັ້ງປະຕິບັດ

ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະກຳມະການອື່ນ, ຄະນະເລຂາ ທີ ການສະພາປະຊາຊົນແຂວງ, ກົງຈັກທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງສ້າງຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 20 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນມະຕິສະບັບເລກທີ 24/ຄປຈ.ສພຂ, ລົງວັນທີ 10 ຕຸລາ 2016.

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ

ປະທານ

ບຸນມີ ພິມມະສອນ

สแกนด้วย CamScanner